ກະຊວງວິທະຍາສາດແລະເຕັກໂນໂລຊີ
ເລກທີ 0121 ກວຕ
ລົງວັນທີ 17 JAN 2014
ເວລາ 1343
ລົງເຊັນ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ນາຍົກລັດຖະມົນຕີ** ເລກທີ 24 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 15.1.2014

# ດຳລັດ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກຳມະການພົວພັນຄົນເຊື້ອຊາດລາວຢູ່ຕ່າງປະເທດ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມ ມະຕິຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 73/ຄລສພ/07, ລົງວັນທີ 13 ກັນຍາ 2007 ວ່າດ້ວຍວຽກງານພົວພັນຄົນເຊື້ອຊາດລາວຢູ່ຕ່າງປະເທດ;
- ອີງຕາມ ໜັງສືສະເໜີຂອງກະຊວງການຕ່າງປະເທດ ສະບັບເລກທີ 008629/ພລຕ-2, ລົງວັນທີ 18 ພະຈິກ 2013;

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ອອກດຳລັດ:**

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ ຂອງຄະນະກຳມະການພົວພັນຄົນເຊື້ອຊາດລາວຢູ່ຕ່າງປະເທດ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງຂອງທຸກພາກສ່ວນ ແລະ ຂະແໜງການ ເປັນເອກະພາບໃນການເຄື່ອນໄຫວຍາດແຍ່ງຄົນເຊື້ອຊາດລາວຢູ່ຕ່າງປະເທດ ແນໃສ່ໃຫ້ເຂົາເຈົ້າຫັນມາປະກອບສ່ວນໃນການສ້າງສາພັດທະນາປະເທດຊາດ ຕາມແນວທາງນະໂຍບາຍຂອງພັກ ແລະ ລັດ.

**ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດ**

ຄະນະກຳມະການພົວພັນຄົນເຊື້ອຊາດລາວຢູ່ຕ່າງປະເທດ ຂຽນຫຍໍ້ວ່າ "ຄພລຕ" ເປັນອົງການຈັດຕັ້ງໜຶ່ງຂອງລັດຖະບານ ທີ່ຂຶ້ນກັບກະຊວງການຕ່າງປະເທດ ໂດຍມອບໝາຍໃຫ້ລັດຖະມົນຕີວ່າການກະຊວງການຕ່າງປະເທດ ເປັນຜູ້ຊີ້ນຳ, ມີພາລະບົດບາດເປັນເສນາທິການໃຫ້ລັດຖະບານ ຄົ້ນຄວ້າກ່ຽວກັບ ບັນດານະໂຍບາຍ, ຮູບການ ແລະ ການເຄື່ອນໄຫວ ທີ່ມີຕໍ່ຄົນເຊື້ອຊາດລາວຢູ່ຕ່າງປະເທດ ຕາມມະຕິຂອງຄະນະເລຂາທິການສູນກາງພັກວາງອອກ.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

### ມາດຕາ 3. ໜ້າທີ່

ໜ້າທີ່ຂອງຄະນະກຳມະການພົວພັນຄົນເຊື້ອຊາດລາວຢູ່ຕ່າງປະເທດ ມີດັ່ງນີ້:

1. ເປັນເສນາທິການຄົ້ນຄວ້າ ກ່ຽວກັບແນວທາງນະໂຍບາຍລະບຽບກົດໝາຍ ທີ່ມີຕໍ່ກັບຄົນເຊື້ອຊາດລາວຢູ່ຕ່າງປະເທດ ເພື່ອຂໍຄຳເຫັນດີຈາກຂັ້ນເທິງ;
2. ວາງແຜນການ, ແຜນງານ ແລະ ອຳນວຍຄວບຄຸມການພົວພັນ, ຂົນຂວາຍ ແລະ ຍາດແຍ່ງຄົນເຊື້ອຊາດລາວຢູ່ຕ່າງປະເທດ ເພື່ອໃຫ້ມາສະໜັບສະໜູນແນວທາງນະໂຍບາຍ ຂອງພັກ-ລັດເຮົາ ຕິດພັນກັບບ້ານເກີດເມືອງນອນ ແລະ ມາຮ່ວມສ້າງສາພັດທະນາປະເທດຊາດ ຕາມຄວາມສາມາດ ແລະ ສະໝັກໃຈຂອງເຂົາເຈົ້າ;
3. ສ້າງກົນໄກອຳນວຍຄວາມສະດວກ ແລະ ເພື່ອແນໃສ່ການສົ່ງເສີມການໄປມາຫາສູ່ກັນ ລະຫວ່າງ ປະຊາຊົນລາວ ແລະ ຄົນເຊື້ອຊາດລາວຢູ່ຕ່າງປະເທດ ໃຫ້ນັບມື້ນັບດີຂຶ້ນ;
4. ຕິດຕາມ ແລະ ຊອກຮູ້ສະພາບການເຄື່ອນໄຫວຂອງຄົນເຊື້ອຊາດລາວຢູ່ຕ່າງປະເທດ ເພື່ອພົວພັນເຊິ່ງກັນແລະ ກັນ ແລະ ສະກັດກັ້ນການເຄື່ອນໄຫວຂອງກຸ່ມຄົນທີ່ບໍ່ຫວັງດີ, ທີ່ມີເຈດຕະນາທຳລາຍມ້າງເພລະບອບໃໝ່ ແລະ ປະເທດຊາດ;
5. ຈັດຕັ້ງແບ່ງງານ ແລະ ມອບວຽກກວດກາປະເມີນຜົນແຕ່ລະວຽກ ແຕ່ລະໄລຍະ ໃຫ້ພາກສ່ວນທີ່ກ່ຽວຂ້ອງທັງລະດັບສູນກາງ ແລະ ທ້ອງຖິ່ນ ສະຫລຸບລາຍງານໃຫ້ຂັ້ນເທິງເປັນປົກກະຕິ;
6. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

### ມາດຕາ 4. ຂອບເຂດສິດ

ຄະນະກຳມະການພົວພັນຄົນເຊື້ອຊາດລາວຢູ່ຕ່າງປະເທດ ມີສິດດັ່ງນີ້:

1. ພົວພັນ ແລະ ແລກປ່ຽນຖອດຖອນບົດຮຽນກັບປະເທດເພື່ອນມິດ ກ່ຽວກັບວຽກງານພົວພັນຄົນເຊື້ອຊາດລາວຢູ່ຕ່າງປະເທດ. ພ້ອມດຽວກັນນັ້ນ, ກໍ່ມີສິດເຂົ້າຮ່ວມປະຊຸມທີ່ການຈັດຕັ້ງສາກົນ ກໍ່ຄືການຈັດຕັ້ງຄົນເຊື້ອຊາດລາວຢູ່ຕ່າງປະເທດຈັດຂຶ້ນ ຕາມຄຳເຊື້ອເຊີນ ແລະ ຕາມຄວາມຈຳເປັນຕົວຈິງ;
2. ຄົ້ນຄວ້າ ແລະ ນຳສະເໜີຕໍ່ລັດຖະບານ ກ່ຽວກັບແຜນການ ແລະ ການຈັດຕັ້ງປະຕິບັດວຽກງານຕ່າງໆ ທີ່ພົວພັນເຖິງການຕອບໂຕ້ການເຄື່ອນໄຫວຕ້ານ ສປປ ລາວ ຂອງກຸ່ມຄົນບໍ່ຫວັງດີຢູ່ຕ່າງປະເທດ;
3. ມອບໝາຍວຽກ ແລະ ປະສານງານກັບກະຊວງ, ອົງການທຽບເທົ່າ ແລະ ສຳນັກງານຕາງໜ້າການທູດລາວຢູ່ຕ່າງປະເທດ ກໍ່ຄືສະຖານທູດຕ່າງປະເທດ ຢູ່ ສປປ ລາວ ກ່ຽວກັບວຽກງານພົວພັນຄົນເຊື້ອຊາດລາວຢູ່ຕ່າງປະເທດ;
4. ໃຫ້ການຮ່ວມມືກັບອົງການຈັດຕັ້ງ ແລະ ບຸກຄົນເຊື້ອຊາດລາວຢູ່ຕ່າງປະເທດ ທີ່ມາເຄື່ອນໄຫວຖືກກົດໝາຍຢູ່ ສປປ ລາວ;
5. ປະຕິບັດສິດອື່ນໆ ຕາມການຕົກລົງ ຂອງລັດຖະມົນຕີວ່າການກະຊວງການຕ່າງປະເທດ.

## ໝວດທີ III
## ໂຄງປະກອບການຈັດຕັ້ງ

### ມາດຕາ 5. ໂຄງປະກອບກົງຈັກ

ຄະນະກຳມະການພົວພັນຄົນເຊື້ອຊາດລາວຢູ່ຕ່າງປະເທດ ເປັນການຈັດຕັ້ງທີ່ບໍ່ປະຈຳການ ໂດຍຖືເອົາກົມ